ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດວິສາຫະກິດໄຟຟ້າລາວ

ເລກທີ: 0489 /ຟຟລ.ຫຟຟລ

ນະຄອນຫລວງວຽງຈັນ, ວັນທີ: 05 FEB 2026

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫ່ຍ) ໄດ້ນຳໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນ ປີ 2024 ເພື່ອດຳເນີນການຈັດຈ້າງ ອະນາໄມ ແລະ ບຳລຸງຮັກສາພ້ອມ ອາໄຫຼ່ລົບໂດຍສານ ແລະ ລົບຂົນສົ່ງປະຈຳປີ 2026 ຂອງອາຄານສຳນັກງານໃຫຍ່ ແລະ ອາຄານສະຖານບັນ ຟຟລ. ໂດຍຂໍຖືເປັນກຽດ ເຊີນບັນດາບໍລິສັດທີ່ມີຄຸນນະສົມບັດຄົບຖ້ວນເຂົ້າຮ່ວມປະມູນ ຈັດຈ້າງໃນຄັ້ງນີ້, ຮັບປະກັນລາຄາຕາມທີ່ສະເໜີໃນປື້ມປະມູນ 90 ວັນ ພາຍຫຼັງເປີດຊອງປະມູນ, ໄລຍະການພາກບໍລິການບຳລຸງຮັກສາ 1 ປີ / 12 ຄັ້ງ. ໄລຍະພາກສ້ອມແປງປ່ຽນແທນອາໄຫຼ່ 30 ວັນ.
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 02 ພະຈິກ 2017. ແລະ ເອກະສານ ຄຳແນະນຳການໃຊ້ກົດໝາຍ ສະບັບເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄຳແນະນຳເພີ່ມເຕີມສຳລັບ ມາດຕາ 23 ແລະ ມາດຕາ 31 ຂອງຄຳແນະນຳການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບທະບຽນວິສາຫະກິດຖືກຕ້ອງຕາມກົດໝາຍ ແລະ ໃບມອບພັນທະອາກອນ ປີ 2024-2025 ທີ່ນຳໃຊ້ໄດ້ເຖິງວັນທີ: 31/12/2025 ທີ່ຖືກຕ້ອງຕາມກົດໝາຍ ຫລື (ເອກະສານຢັ້ງຢືນຈາກອົງການທີ່ກ່ຽວຂ້ອງດັ່ງກ່າວ) ແລະ ຕ້ອງແມ່ນ ບໍລິສັດທີ່ຈົດທະບຽນ ຢູ່ໃນລາວເທົ່ານັ້ນ ທີ່ສາມາດເຂົ້າຍື່ນຊອງປະມູນໄດ້.
4. ບໍລິສັດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈຳນົງຊື້ເອກະສານປະມູນໄດ້ທີ່ ລັດວິສາຫະກິດໄຟຟ້າລາວ (ສຳນັກງານໃຫ່ຍ), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316094-1614 ທີ່ ພະແນກຈັດຊື້-ຈັດຈ້າງ, ຫ້ອງການໄຟຟ້າລາວ, ຊັ້ນ 01 ຕຶກສຳນັກງານໃຫ່ຍ ລັດວິສາຫະກິດໄຟຟ້າລາວ ໃນໂມງລັດຖະການ ເລີ່ມແຕ່ວັນທີ: 11 /02/2026 ຫາ ວັນທີ: 02 /03/2026 (ມື້ປິດຂາຍຊອງປະມູນ), ໃນລາຄາ 200,000 ກີບ/ຊອງ (ລວມອາກອນມູນຄ່າເພີ່ມ 10 %) ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊຳລະຕ້ອງຈ່າຍເປັນເງິນສົດ).
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ: 02 /03/2025 ທີ່ຫ້ອງປະຊຸມໃຫຍ່ຊັ້ນ 08, ຫ້ອງ 802 ສຳນັກງານໃຫຍ່ ຟຟລ. ຊອງປະມູນໃດສົ່ງຊ້າເກີນເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກຳມະການ ຈັດຊື້-ຈັດຈ້າງ ລັດວິສາຫະກິດໄຟຟ້າລາວ, ຕາງໜ້າຈາກກະຊວງການເງິນ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.
6. ຜູ້ປະມູນຕ້ອງມີໜັງສືເງິນຄ້ຳປະກັນຊອງປະມູນໃນອັດຕາ 2% ຂອງມູນຄ່າທີ່ສະເໜີໃນການປະມູນ (ຕ້ອງເປັນໜັງສືຄ້ຳປະກັນຈາກທະນາຄານ ທີ່ນຳໃຊ້ເຖິງ ວັນທີ: 30/06/2025.

ຜູ້ອຳນວຍການໃຫຍ່

ບໍລິສັດລັດ ວິສາຫະກິດໄຟຟ້າລາວ ELECTRICITE DU LAOS

ປອ. ອາຄົມເດດ ວົງໄຊ

ຜູ້ອຳນວຍການໃຫຍ່

ຖະໜົນມິດຕະພາບລາວ-ໄທ,ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ ສ ປ ປ ລາວ.
ໂທ: (856-21) 316094-1614 ແຟັກ: (856-21) 316118; 263794; ອີເມລ: edlprocurement@gmail.com; ເວັບໄຊ: www.edl.com.la